Children are our future
**Sharon International School**
Saphantong Village, Sisattanak District, Vientiane Lao P.D.R.
P.O.BOX 4951 / Phone: (856) 30-5150937 / 021-353275

ເຖິງ: ທ່ານຜູ້ປົກຄອງນັກຮຽນ ໂຮງຮຽນ ຊາຣອນ

ກ່ອນອື່ນໝົດ, ໂຮງຮຽນຂໍຂອບໃຈທ່ານຜູ້ປົກຄອງນັກຮຽນທີ່ສະລະເວລາໃນການເອົາໃຈໃສ່ພິເສດ ແລະ ຄວາມພະຍາຍາມຂອງທ່ານທີ່ໄດ້ຊ່ວຍເຫຼືອລູກຂອງທ່ານໃນສອງສາມອາທິດທີ່ຜ່ານມານີ້.ໂຮງຮຽນຂອງພວກເຮົາກໍ່ຄຳນຶງເຖິງວ່າມັນບໍ່ແມ່ນເລື່ອງທີ່ງ່າຍເລີຍແຕ່ວ່າທາງໂຮງຮຽນຂອງພວກເຮົາຮູ້ເຖິງຄຸນຄ່າການເອົາໃຈໃສ່ເບິ່ງແຍງຂອງຜູ້ປົກຄອງ ແລະ ການເອົາໃຈໃສ່ຊ່ວຍເຫຼືອລູກຂອງທ່ານໃນການຈັດການແກ້ວຽກບ້ານທີ່ທາງໂຮງຮຽນໄດ້ຈັດກຽມໃຫ້.

ໂຮງຮຽນໄດ້ຮັບແຈ້ງເຖິງຄຳຖະແຫຼງການຂອງທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ. ທີ່ໄດ້ຮຽກຮ້ອງໃຫ້ມີການສືບຕໍ່ປະຕິບັດຢ່າງເຂັ້ມງວດ ແລະ ຖືກຕ້ອງຕາມຄຳສັ່ງ ເລກທີ06/ນຍ ລົງວັນທີ 29 ມີນາ 2020,ເພື່ອຈະໄດ້ພັກຮຽນເພີ່ມອີກໃນສອງອາທິດຕໍ່ໄປ.ໂຮງຮຽນຫວັງວ່າຖ້າພວກເຮົາທຸກຄົນຊ່ວຍກັນປະຕິບັດຕາມຄຳສັ່ງຢ່າງເຂັ້ມງວດປະເທດລາວກໍ່ຈະດີຂຶ້ນກວ່າເກົ່າ. ສຳລັບແຜນການໃນການເປີດໂຮງຮຽນອີກຄັ້ງແມ່ນວັນອັງຄານ ທີ 5 ພຶດສະພາ 2020 ລວມຊັ້ນອະນຸບານ, ຊັ້ນປະຖົມ ແລະ ມັດທະຍົມ. ຖ້າຫາກມີການປ່ຽນແປງໃດໆທາງໂຮງຮຽນແມ່ນຈະແຈ້ງເພີ້ມເຕີມໂດຍຈະປະກາດຜ່ານເຟດສບຸກຂອງໂຮງຮຽນ.

ສຳລັບການຮຽນອອນລາຍຂອງພວກເຮົາແມ່ນຍັງຄົງສືບຕໍ່ສຳລັບນັກຮຽນປະຖົມ-ມັດທະຍົມ. ກະລຸນາຮັບຊາບວ່າ ສຳລັບບົດຮຽນ ຫຼື ວຽກບ້ານທີ່ນັກຮຽນເຮັດສຳເລັດໃນຊ່ວງພັກຮຽນນີ້ແມ່ນຈະມີການຄິດໄລ່ ແລະ ເກັບກຳເພື່ອໃຫ້ຄະແນນໃນທ້າຍປີ, ສະນັ້ນຈິ່ງຂໍໃຫ້ທ່ານຜູ້ປົກຄອງກະລຸນາຊ່ວຍລູກຂອງທ່ານໃນການແກ້ບົດວຽກບ້ານ,ໃຫ້ມີຄວາມຮັບຜິດຊອບຕໍ່ໜ້າທີ່ຂອງພວກເຂົາ ແລະ ສ້າງໃຫ້ລູກຂອງທ່ານມີຄວາມດຸໝັ່ນໃນການຮຽນຂອງພວກເຂົາ. ທາງໂຮງຮຽນຍັງຄົງສືບຕໍ່ອັບໂຫຼດວີດີໂອລົງໃນຊ່ອງທາງ YouTube ຂອງໂຮງຮຽນເພື່ອນັກຮຽນອະນຸບານຈະໄດ້ທົບທວນເຊັ່ນກັນ.

ສຳລັບສົກຮຽນຂອງພວກເຮົາປີນີ້ແມ່ນຍັງເໝືອນເດີມແລະຈະສິ້ນສຸດລົງໃນວັນທີ 30 ພຶດສະພາ 2020; ເຖິງຢ່າງໃດກໍ່ຕາມ, ໂຮງຮຽນແມ່ນມີການວາງແຜນວ່າຈະມີຫຼັກສູດເພີ່ມເຕີມສຳລັບນັກຮຽນຊັ້ນອະນຸບານພາຍໃນເດືອນມິຖຸນາ. ພ້ອມນັ້ນໂຮງຮຽນກຳລັງມີການພິຈາລະນາສຳລັບຊັ້ນປະຖົມ-ມັດທະຍົມໂດຍທີ່ທາງໂຮງຮຽນຈະໄດ້ມີການຕິດຕາມຫຼັກສູດການຮຽນ-ການສອນຂອງໂຮງຮຽນ ແລະ ການບັນຈຸນັກຮຽນຂອງພວກເຮົາ.

ນອກຈາກນີ້ ໂຮງຮຽນ ຊາຣອນຂໍແຈ້ງຂ່າວດີມາຍັງພໍ່ແມ່ຜູ້ປົກຄອງນັກຮຽນທຸກຄົນໃຫ້ຮັບຊາບວ່າ ທາງໂຮງຮຽນໄດ້ມີການເລື່ອນກຳນົດການລົງທະບຽນຈັບຈອງບ່ອນນັ່ງ ແລະ ສຳລັບສ່ວນຫຼຸດພິເສດສຳລັບສົກຮຽນປີ 2020-2021. ການຈັບຈອງບ່ອນນັ່ງແມ່ນເລື່ອນອອກເປັນວັນທີ 8 ພຶດສະພາ. ສຳລັບຜູ້ປົກຄອງທີ່ສົນໃຈຮັບສ່ວນຫຼຸດພິເສດກໍລະນີຊຳລະຄ່າຮຽນໝົດປີແມ່ນບໍ່ໃຫ້ເກີນກຳນົດວັນທີ 19 ມິຖຸນາ 2020.



Scanned with CamScanner

ອີກຄັ້ງໜຶ່ງ, ພວກເຮົາຕ້ອງຂໍຂອບໃຈຜູ້ປົກຄອງທຸກໆທ່ານທີ່ໃຫ້ການສະໜັບສະໜູນລູກຂອງທ່ານ. ເຊິ່ງສະຖານະການທີ່ເກີດຂື້ນໃນໂລກຂອງພວກເຮົາໃນປະຈຸບັນແມ່ນມີຄວາມຫຍຸ້ງຍາກສໍາລັບພວກເຮົາທຸກຄົນ, ແຕ່ພວກເຮົາກໍ່ມີຄວາມຫວັງວ່າຈະຍັງຄົງສືບຕໍ່ສະໜັບສະໜູນເຊິ່ງກັນແລະກັນເພື່ອຜົນດີຂອງນັກຮຽນ.

ຖ້າທ່ານຫາກມີຄໍາຖາມ ຫຼື ຕ້ອງການລາຍລະອຽດເພີ່ມເຕີມ, ກະລຸນາຕິດຕໍ່ພົວພັນຫ້ອງການໂຮງຮຽນ
ໝາຍເລກໂທລະສັບໂຮງຮຽນອະນຸບານ: 030-5150937 / 030-5232224
ໝາຍເລກໂທລະສັບໂຮງຮຽນປະຖົມ - ມັດທະຍົມ: 030-5989980 / 021-353275

ທີ່ໂຮງຮຽນຊາຣອນ ລົງວັນທີ 16 ເມສາ 2020

ໂຮງຮຽນ ນານາຊາດ ຊາຣອນ ຈໍາກັດຜູ້ດຽວ
Sharon International School
ນະຄອນຫລວງ ວຽງຈັນ



Scanned with CamScanner

Children are our future
**Sharon International School**
Saphantong Village, Sisattanak District, Vientiane Lao P.D.R.
P.O.BOX 4951 / Phone: (856) 30-5150937 / 021-353275

April 16, 2020

Dear Parents,

First, of all we'd like to thank you all for the extra work and effort you have given to help your child over the past few weeks. We know it hasn't been easy but we appreciate your care for them and then helping them to manage their work from the school.

We have received the announcement from the Prime Minister of Laos requiring the lockdown to be maintained for two more weeks. We are hopeful that if we all follow this order Laos will be better off for it! Our new plan is to be able to go to school on Tuesday, May 5, 2020 at both campuses. We will announce via Facebook with any changes!

Our online classes will continue for the Primary – Middle School. Please be reminded that the work done over this break counts to the overall grades for the year, so please help your child manage their assignments and be diligent in their studies! We'll continue to upload to YouTube for the Kindergarten students.

Our school year will remain the same and end on May 30, 2020; however, we are planning on having an additional course for the Kindergarten for the month of June. We are still considering for Primary – Middle School as we look at our curriculum and the placement of our students.

We'd also like to inform our parents that we are extending the deadline for 2020-2021 registration fee payments to be by May 8, 2020 and then the full tuition discounts for the coming year must be paid by June 19, 2020.

Again, we want to thank you all how you are supporting your children! Our current world's situation is difficult for all of us, but we hope to continue to support one another for the good of the children!

If you have any questions or need clarity, please contact the appropriate school office.
Kindergarten: 030-5150937 / 030-5232224
Primary-Middle School: 030-5989980 / 021-353275

**Sharon International School**

Sharon International School



Scanned with CamScanner